ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*****************

ເລກທີ..06../ຄອກ

ຄະນະກຳມະການຄົ້ນຄວ້າ

ສະເໜີການໃຫ້ອະໄພຍະໂທດຂັ້ນສູນກາງ

ນະຄອນຫຼວງວຽງຈັນ, ວັນທີ.07./.02./2012

# ການກຳນົດຕົວເລກ
# ການໃຫ້ອະໄພຍະໂທດ ຫຼຸດຜ່ອນໂທດ
# ແລະ ປ່ອຍຕົວນັກໂທດ ປະຈຳປີ 2012

- ອີງຕາມ: ລັດຖະທຳມະນູນ ແຫ່ງສປປ ລາວ ໝວດທີ VI ມາດຕາ 67 ຂໍ້ 11 ວ່າດ້ວຍການໃຫ້ອະໄພຍະໂທດ.
- ອີງຕາມ: ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແຫ່ງ ສປປ ລາວ.
- ອີງຕາມ: ມະຕິຕົກລົງ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 37/ຄປຈ, ລົງວັນທີ 23 ເມສາ 2010 ວ່າດ້ວຍການຈັດຕັ້ງປະຕິບັດວຽກງານອະໄພຍະໂທດ.

ເພື່ອເປັນບ່ອນໃຫ້ແກ່ ຄະນະກຳມະການຄົ້ນຄວ້າສະເໜີການໃຫ້ອະໄພຍະໂທດຂັ້ນສູນກາງ ມີບ່ອນອີງໃນການຄົ້ນຄວ້າພິຈາລະນາໃນການກຳນົດຕົວເລກໃນການ ຫຼຸດຜ່ອນໂທດ ແລະ ປ່ອຍຕົວນັ້ນ ຄະນະກຳມະການ ຈຶ່ງໄດ້ກຳນົດຕົວເລກ ໃນການຫຼຸດຜ່ອນໂທດ ແລະ ປ່ອຍຕົວ ໃຫ້ແກ່ນັກໂທດທີ່ມີໂທດ ຕັດອິດສະລະພາບ ແຕ່ ຫ້າປີ ຫາ ຊາວປີ ຕາມສະຖານການກະທຳຜິດດັ່ງນີ້:

## I ການກະທຳຜິດໃນສະຖານໂທສານຸໂທດ

1. ນັກໂທດ ມີຄວາມກ້າວໜ້າໃນການດັດສ້າງຕົນເອງ ໄດ້ປະເພດ 01 ໃຫ້ຫຼຸດຜ່ອນໂທດ ຕັດອິດສະລະພາບ ແຕ່ 09 ເດືອນ.

- ໃຫ້ຫຼຸດຜ່ອນໂທດຄ່າປັບໃໝ ສາມສ່ວນຮ້ອຍ ( 3% ) ຂອງມູນຄ່າປັບໃໝທັງໝົດ.

2. ນັກໂທດ ມີຄວາມກ້າວໜ້າໃນການດັດສ້າງຕົນເອງ ໄດ້ປະເພດ 02 ໃຫ້ຫຼຸດຜ່ອນໂທດ ຕັດອິດສະລະພາບ ແຕ່ 06 ເດືອນ.

- ຫຼຸດຜ່ອນໂທດ ປັບໃໝ ສອງສ່ວນຮ້ອຍ ( 2% ) ຂອງມູນຄ່າປັບໃໝທັງໝົດ.

## II. ການກະທຳຜິດໃນສະຖານຄະຣູໂທດທົ່ວໄປ

1. ນັກໂທດ ມີຄວາມກ້າວໜ້າດັດສ້າງຕົນເອງ ໄດ້ປະເພດ 01 ໃຫ້ຫຼຸດຜ່ອນໂທດ ຕັດອິດສະລະພາບ 09 ເດືອນ ແລະ ໂທດປັບໃໝ ຫ້າສ່ວນຮ້ອຍ ( 5% ) ຂອງມູນຄ່າທັງໝົດ.
2. ນັກໂທດ ທີ່ມີຄວາມກ້າວໜ້າດັດສ້າງຕົນເອງ ໄດ້ປະເພດ 02 ໃຫ້ຫຼຸດຜ່ອນໂທດ ຕັດອິດສະລະພາບ 06 ເດືອນ ແລະ ໂທດຄ່າປັບໃໝ ສາມສ່ວນຮ້ອຍ ( 3% ) ຂອງມູນຄ່າທັງໝົດ.

## III. ການກະທຳຜິດໃນສະຖານຄະຣູໂທດ ກ່ຽວກັບຢາເສບຕິດ.

1. ນັກໂທດ ທີ່ມີຄວາມກ້າວໜ້າດັດສ້າງຕົນເອງ ໄດ້ປະເພດ 01 ໃຫ້ຫຼຸດຜ່ອນໂທດ ຕັດອິດສະລະພາບ ແຕ່ 06 ເດືອນ ແລະ ຫຼຸດໂທດປັບໃໝ ສາມສ່ວນຮ້ອຍ ( 3% ) ຂອງມູນຄ່າທັງໝົດ.
2. ນັກໂທດ ທີ່ມີຄວາມກ້າວໜ້າດັດສ້າງຕົນເອງ ໄດ້ປະເພດ 02 ໃຫ້ຫຼຸດຜ່ອນໂທດ ຕັດອິດສະລະພາບ 03 ເດືອນ ແລະ ຫຼຸດໂທດຄ່າປັບໃໝ ສອງສ່ວນຮ້ອຍ ( 2% ) ຂອງມູນຄ່າທັງໝົດ.

## IV. ການຫຼຸດຜ່ອນໂທດ ໃຫ້ນັກໂທດທີ່ມີໂທດ ຕັດອິດສະລະພາບຕະຫຼອດຊີວິດ.

1. ນັກໂທດ ທີ່ມີໂທດ ຕັດອິດສະລະພາບ ຕະຫຼອດຊີວິດ. ໃຫ້ຫຼຸດຜ່ອນໂທດລົງມາເປັນໂທດ ຕັດອິດສະລະພາບ ຊາວ ປີ ແລະ ຫຼຸດຜ່ອນໂທດຄ່າປັບໃໝ ຫ້າສ່ວນຮ້ອຍ ( 5 % ) ຂອງມູນຄ່າທັງໝົດ.

## V. ການຫຼຸດຜ່ອນໂທດໃຫ້ນັກໂທດ ທີ່ມີໂທດປະຫານຊີວິດ.

1. ນັກໂທດ ທີ່ມີໂທດປະຫານຊີວິດ ໃຫ້ຫຼຸດຜ່ອນໂທດລົງມາເປັນໂທດ ຕັດອິດສະລະພາບ ຕະຫຼອດຊີວິດ.

## VI. ການໃຫ້ອະໄພຍະໂທດປ່ອຍຕົວ.

1. ນັກໂທດ ທີ່ມີຄວາມກ້າວໜ້າໃນການດັດສ້າງຕົນເອງ ປະເພດ 01 ຫຼື 02.
2. ໃຊ້ແທນຄ່າເສັຍຫາຍທາງແພ່ງ ຢ່າງໜ້ອຍເຄິ່ງໜຶ່ງ ( 1/2 ) ຂອງມູນຄ່າເສັຍຫາຍທັງໝົດ ແລະ ປະຕິບັດໂທດປັບໃໝ ຢ່າງໜ້ອຍ ຫ້າສ່ວນຮ້ອຍ ( 5% ) ຂອງໂທດປັບໃໝທັງໝົດ ຕາມຄຳຕັດສິນຂອງສານ ຫຼື ຄຳພິພາກສາ ຂອງສານ.
3. ມີອາຍຸ 60 ປີຂຶ້ນໄປ ແລະ ມີສຸຂະພາບອ່ອນເພັຍ ຊຶ່ງບໍ່ສາມາດປະຕິບັດໂທດຕໍ່ໄປໄດ້.
4. ເປັນພະຍາດຕິດແປດຊຳເຮື້ອຮ້າຍແຮງ, ເປັນໂຊໜັກ ບໍ່ສາມາດປິ່ນປົວໃຫ້ຫາຍດີໄດ້ເຊັ່ນ: ອຳມະພາດ ຈົນບໍ່ສາມາດຊ່ວຍເຫຼືອຕົນເອງໃນການເຄື່ອນໄຫວໄປມາໄດ້.
5. ໂທດຍັງເຫຼືອ 01 ປີລົງມາ.
6. ສຳລັບນັກໂທດ ຢາເສບຕິດ, ລັກຊັບ, ຊິງຊັບ ແລະ ປຸ້ນຊັບ ສານຕັດສິນລົງໂທດ ແຕ່ 05 ປີລົງມາ ແມ່ນບໍ່ໃຫ້ສະເໜີປ່ອຍຕົວ ມີແຕ່ໃຫ້ສະເໜີຫຼຸດຜ່ອນໂທດເທົ່ານັ້ນ.

ຜູ້ທີ່ຈະໄດ້ຮັບການໃຫ້ອະໄພຍະໂທດ ຕາມເງື່ອນໄຂຂໍ້ທີ 03 ແລະ 04 ຕ້ອງມີການຢັ້ງຢືນຈາກຄະນະແພດຢ່າງເປັນທາງການ.

ດັ່ງນັ້ນ, ຄະນະກຳມະການ ຈຶ່ງໄດ້ກຳນົດຕົວເລກການຫຼຸດຜ່ອນໂທດທາງອາຍາ, ຜ່ານໂທດ ປັບໃໝ ແລະ ປ່ອຍຕົວ ເພື່ອເປັນບ່ອນອີງໃນການຄົ້ນຄວ້າພິຈາລະນາ.

ຫົວໜ້າອົງການໄອຍະການປະຊາຊົນສູງສຸດ
ປະທານຄະນະກຳມະການຄົ້ນຄວ້າການສະເໜີໃຫ້ອະໄພຍະໂທດຂັ້ນສູນກາງ

ຄຳສານ ສຸວົງ